

# ຕ່ອງໂສ້ການຕະຫຼາດມັນຕົ້ນ ຢູ່ ແຂວງຈຳປາສັກ ແລະ ແຂວງສາລະວັນ

ນຳສະເໜີໂດຍ: ທ້າວສັນຕິສຸກ ອິນສີຊຽງໃໝ່

ສູນຄົ້ນຄວ້າເສດຖະກິດ ແລະ ພັດທະນາຊົນນະບົດ, ສກປພ

# 1. ຕ່ອງໂສ້ມູນຄ່າມັນຕົ້ນ ຂ.ຈຳປາສັກ - ມ.ປະທຸມພອນ ແລະ ມ. ບາຈຽງຈະເລີນສຸກ

- ການຜະລິດມັນຕົ້ນ - ສົ່ງອອກ (ໄທ ແລະ ຫວຽດນາມ)
- ມັນແຫ້ງ: ຜົນຜະລິດທັງໝົດ 360,129 ໂຕນ ສົ່ງອອກໄປ ປະເທດໄທ ແລະ ຫວຽດນາມ
- ຫົວມັນດິບ: ຜົນຜະລິດທັ້ງໝົດ 179,720ໂຕນ ສົ່ງອອກ ປະເທດໄທ ແລະ ຫວຽດນາມ
- ບໍລິສັດເກັບຊື້ມັນຕົ້ນມີ ທັງໝົດ 11 ບໍລິສັດທີ ເກັບຊື້ ແລະ ສົ່ງອອກ ສາມາດ ສົ່ງອອກໄດ້ 588,634 ໂຕນ ໃນປີ 2017.

# 1. ຕ່ອງໂສ້ມູນຄ່າມັນຕົ້ນ ຂ.ຈຳປາສັກ - ມ.ປະທຸມພອນ ແລະ ມ. ບາຈຽງຈະເລີນສຸກ

- ມີ 1 ໂຮງງານຜະລິດແປ້ງມັນຕົ້ນຄື: ໂຮງງານແປ້ງ KPN
- ສາມາດຜະລິດແປ້ງມັນ: ຜົນຜະລິດທັງໝົດ 1,470 ໂຕນ ແລະ  ສົ່ງອອກໄປ ປະເທດ ອິສຕາລີ ແລະ ຈີນ (ໃຕ້ຫວັນ) ໃນປີ 2017;
- ຮູບແບບການຂາຍຂອງຊາວກະສິກອນມີ: ມັນແຫ້ງ 86% ແລະ ຫົວມັນສົດ 14% ການຂາຍຂອງຊາວກະສິກອນແມ່ນອີງໃສ່ລານເກັບຊື້ທີ່ຢູ່ໃກ້ເຂດການຜະລິດ ເພື່ອສະດວກໃນຂົນໄປຂາຍເອງ.
- ມັນແຫ້ງ: ຂາຍໃຫ້ແກ່ພໍ່ຄ້າຂະໜາດນ້ອຍ ແລະ ພໍ່ຄ້າຄົນກາງຂະໜາດໃຫຍ່
- ມັນດິບ: ຂາຍໃຫ້ແກ່ພໍ່ຄ້າຂະໜາດນ້ອຍ, ພໍ່ຄ້າຄົນກາງຂະໜາດໃຫຍ່ ແລະ ໂຮງງານແປ້ງ.

# ຕ່ອງໂສ້ມູນຄ່າມັນຕົ້ນ ຂ.ຈຳປາສັກ - ມ.ປະທຸມພອນ ແລະ ມ. ບາຈຽງຈະເລີນສຸກ



# 2. ຕ່ອງໂສ້ມູນຄ່າມັນຕົ້ນ ຂ.ສາລະວັນ, ມ.ເລົາງາມ, ມ. ລະຄອນເພັງ

- ການຜະລິດມັນຕົ້ນ - ສົ່ງອອກ (ປະເທດໄທ ແລະ ຫວຽດນາມ)
- ມັນແຫ້ງ: ຜົນຜະລິດທັງໝົດ 42,385 ໂຕນ ສົ່ງອອກໄປປະເທດ ຫວຽດນາມ
- ບໍລິສັດເກັບຊື້ມັນຕົ້ນມີ ທັງໝົດ 41 ຫົວໜ່ວຍທຸລະກິດ ເພື່ອເກັບຊື້ ແລະ ສົ່ງອອກ ໄປ ປະເທດ ໄທ ແລະ ຫວຽດນາມ.
- ມີ 1 ໂຮງງານຜະລິດແປ້ງມັນຕົ້ນຄື: ໂຮງງານແປ້ງ HUFUGO
- ສາມາດຜະລິດແປ້ງມັນ ທັງໝົດ 6,280 ໂຕນ ສົ່ງອອກໄປປະເທດ ຫວຽດນາມ, ຈີນ, ໄທ ແລະ ນຳໃຊ້ພາຍໃນປະເທດຈຳນວນໜຶ່ງ ໃນປີ 2017.

# 2. ຕ່ອງໂສ້ມູນຄ່າມັນຕົ້ນ ຂ.ສາລະວັນ, ມ.ເລົ່າງາມ, ມ. ລະຄອນເພັງ

- ຮູບແບບການຂາຍຂອງຊາວກະສິກອນມີ: ມັນແຫ້ງ 60% ແລະ ຫົວມັນສົດ 40%. ການຂາຍອີງໃສ່ພໍ່ຄ້າທີ່ຢູ່ໃກ້, ແລະ ຊາວກະສິກອນຂົນໄປຂາຍເອງ.

- ມັນແຫ້ງ: ແມ່ນຂາຍໃຫ້ພໍ່ຄ້າຂະໜາດນ້ອຍ - ພໍ່ຄ້າຄົນກາງຂະໜາດໃຫຍ່ຜູ້ສົ່ງອອກ ທີ່ມີລານເກັບຊື້ບໍລິເວນໃກ້ຄຽງ.

- ມັນດິບ: ສ່ວນໃຫຍ່ ຂາຍໃຫ້ໂຮງງານແປ້ງ ແລະ ຂາຍໃຫ້ແກ່ພໍ່ຄ້າຂະໜາດນ້ອຍ, ພໍ່ຄ້າຄົນກາງຂະໜາດໃຫຍ່ ສໍາລັບຊາວກະສິກອນຜູ້ຢູ່ໄກ.

# ຕ່ອງໂສ້ມູນຄ່າມັນຕົ້ນ ຂ.ສາລະວັນ, ມ.ເລົ່າງາມ, ມ. ລະຄອນເພັງ



# 3. ຈຸດແຂງ ການຜະລິດມັນຕົ້ນ ຢູ່ ແຂວງຈຳປາສັກ ແລະ ແຂວງສາລະວັນ

- ຜູ້ຜະລິດ:

  ມີພື້ນທີ່ການຜະລິດທີ່ອຸດົມສົມບູນ, ມີພື້ນຖານໃນການຜະລິດກະສິກຳ, ມີຄວາມອົດທົນດຸໝັ່ນ, ມີອຸປະກອນໃນການຜະລິດ ແລະ ຕົ້ນທຶນໃນການຜະລິດລະດັບໜຶ່ງ.

- ຜູ້ເກັບຊື້:

  ມີລານເກັບຊື້ໃນເຂດການຜະລິດ, ມີຄວາມສະດວກໃນການຊື້-ຂາຍ, ໃກ້ກັບຊາຍແດນໄທ ແລະ ຫວຽດນາມ. ມີນາຍທຶນເຂົ້າມາຮັບຊື້ ແລະ ມີຄວາມສະດວກດ້ານການອຳນວຍເອກະສານສົ່ງອອກ.

- ໂຮງງານແປ້ງ:

  ທີ່ຕັ້ງຂອງໂຮງງານຢູໃນເຂດການຜະລິດສ່ວນໃຫຍ່, ສາມາດເກັບຊື້ຜົນຜະລິດໄດ້ຫຼາຍ, ແລະ ມີຄວາມສະດວກດ້ານການອຳນວຍເອກະສານສົ່ງອອກ.

# 3. ສິ່ງທ້າທາຍ ການຜະລິດມັນຕົ້ນ ຂອງ ແຂວງຈຳປາສັກ ແລະ ສາລະວັນ

- ພາກລັດ:

– ຂະແໜງການຂັ້ນທອງທ້ອງຖິ່ນ ຕ້ອງເປັນໃຈກາງໃນການສະໜອງຄວາມຮູ້ດ້ານເຕັກນິກ, ພະຍາດ, ການຕະຫຼາດໃຫ້ແກ່ຊາວກະສິກອນ.

– ຕ້ອງມີການພົວພັນຮ່ວມມື ແລະ ສະໜັບສະໜູນຂອງທຸກພາກສ່ວນ: ກະສິກຳແລະປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ທະນາຄານ, ໂຮງງານ/ຜູ້ປະກອບການ ໂດຍຜ່ານສົ່ງເສີມກຸ່ມຊາວກະສິກຳກອນ.

– ທະນະຄານສົ່ງເສີມກະສິກຳ ແລະ ທະນາອື່ນໆ ອາດເກີດການໃຊ້ສິນເຊື່ອຜິດເປົ້າໝາຍ, ຄວນມີການຕິດຕາມກວດການ ແຕ່ລະໄລຍະຢ່າງຕໍ່ເນື່ອງ ແລະ ລ່ງນຕິດ.

- ຜູ້ຜະລິດ:

– ຂໍ້ຈຳກັດໃນການເຂົ້າເຖິງແຫຼ່ງສິນເຊື່ອ, ອັດຈາດອກເບ້ຍສູງ, ການເກີດພະຍາດ, ດິນເຊື່ອມຄຸນນະພາບ ແລະ ລາຄາບໍ່ໝັ້ນຄົງ.

# 3. ສິ່ງທ້າທາຍ ການຜະລິດມັນຕົ້ນ ຂອງ ແຂວງຈຳປາສັກ ແລະ ສາລະວັນ (ຕໍ່)

- ຜູ້ເກັບຊື້:

– ຄຸນນະພາບຄວາມຊຸ່ມມັນບໍ່ໄດ້ມາດຖານ, ຂາດເຕັກນິກ-ອຸປະກອນການເກັບຮັກສາ, ແຫຼ່ງທຶນບໍ່ພຽງພໍ, ລະດັບມາດຖານຕາຊັ່ງບໍ່ເປັນເອກະພາບ, ການກຳນົດການບັນທຶກລາຄາແກ່ລົດພ່ວງແມ່-ລູກບໍ່ສອດຄ່ອງກັບສາກົນ, ລະບຽບການໃນການສ້າງຕັ້ງລານຍັງບໍ່ດີເທົ່າທີ່ຄວນ ແລະ ລະບົບເອກະສານໃນການຂົນສົ່ງມີຄວາມຫຍຸ້ງຍາກ.

- ໂຮງງານແປ້ງ:

– ການຊື້ - ຂາຍ ບໍ່ມີສັນຍາ ບໍ່ສາມາດຄາດຄະເນປະລິມານການຊື້ໄດ້, ບໍ່ມີລະບຽບຊັດເຈນໃນການຄຸ້ມຄອງການສ້າງຕັ້ງລານ, ຂັ້ນຕອນການແລ່ນເອກະສານຍັງຫຍຸ້ງຍາກລ້າຊ້າ ແລະ ການຈັດການລະບົບສິ່ງເສດເຫຼືອຂອງໂຮງງານຍັງບໍ່ໄດ້ມາດຖານ.

# 4.ຂໍ້ສະເໜີແນະ

- ສ້າງຫຼືພັດທະນາກຸ່ມຊາວກະສິກອນຜູ້ຜະລິດ ເພື່ອເຈລະຈາ ແລະ ພົວພັນດ້ານການຕະຫຼາດ ກັບພໍ່ຄ້າຜູ້ເກັບຊື້, ພ້ອມທັງໄດ້ຮັບການສະໜັບສະໜູນດ້ານເຕັກນິກຕ່າງໆ ຈາກພາກລັດ ແລະ ເອກະຊົນ.
- ສ້າງຕັ້ງກຸ່ມເກັບຊື້ (ພໍ່ຄ້າ) ເພື່ອຈັດແບ່ງເຂດ ໃນການເກັບຊື້ຜົນຜະລິດກັບຊາວກະສິກອນ ໂດຍມີການເຮັດສັນຍາຢ່າງເປັນລະບົບ ຕາມເງື່ອນໄຂທີ່ເໝາະສົມ.
- ເພີ່ມການພົວພັນລະຫວ່າງ ຊາວກະສິກອນ ແລະ ໂຮງງານປຸງແຕ່ງພາຍໃນ ຫຼື ພໍ່ຄ້າ ແລະ ໂຮງງານປຸງແຕ່ງພາຍໃນ ເພື່ອເພີ່ມປະລິມານການປຸງແຕ່ງພາຍໃນ ແລະ ການສົ່ງອອກແປ້ງມັນຕົ້ນ.
- ສະໜອງສິນເຊື່ອໃຫ້ແກ່ໂຮງງານປຸງແຕ່ງເພື່ອດຳເນີນທຸລະກິດໃນຈຳນວນ ແລະ ອັດຕາດອກເບຍທີ່ເໝາະສົມ ເພື່ອສາມາດດຳເນີນທຸລະກິດ ແລະ ແຂ່ງຂັນ ກັບຜູ້ເກັບຊື້-ສົ່ງອອກໄປປະເທດເພື່ອນບ້ານ ໄດ້ຢ່າງຍືນຍົງ, ພ້ອມທັງເປັນເຈົ້າການໃນການສະໜອງຂໍ້ມູນຂ່າວສານການຕະຫຼາດ ລ່ວງໜ້າ ໃຫ້ແກ່ຊາວກະສິກອນຜູ້ຜະລິດ.


ຂໍຂອບໃຈ